| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ |
| **ປະເພດເອກະສານ** | ໃບອະນຸຍາດດຳເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 07.11.2017 |
| **ພາກສ່ວນຮັບຜິດຊອບ** | ກົມຄຸ້ມຄອງບໍ່ແຮ່ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ນຳໃຊ້ກັບນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບການເສີມຄຸນຄ່າ ແລະ ແຍກແຮ່ທາດ ເພື່ອໃຫ້ກາຍເປັນຜະລິດຕະພັນແຮ່ທາດ ຢູ່ ສປປ ລາວ, ຊຶ່ງມີສອງປະເພດຄື:1. ຜູ້ທີ່ມີສັນຍາພັດທະນາບໍ່ແຮ່ (ຫຼື ເສີມຄຸນຄ່າ ແລະ ແຍກແຮ່ທາດ) ກັບ ລັດຖະບານ (ມີໃບທະບຽນສຳປະທານຈາກຂະແໜງການລົງທຶນ); ສຳລັບກິດຈະການສຳປະທານຈະອອກຄຽງຄູ່ກັບ ໃບອະນຸຍາດຊຸດຄົ້ນ2. ຜູ້ທີ່ໄດ້ຮັບອະນຸຍາດຈາກລັດຖະບານ (ມີໃບທະບຽນລົງທຶນ ຈາກຂະແໜງການລົງທຶນ); ສຳລັບກິດຈະການໂຮງງານທີ່ບໍ່ມີເຂດສຳປະທານ |
| **ເງື່ອນໄຂໃນການຂໍເອກະສານ** | ສຳລັບຜູ້ທີ່ບໍ່ມີເຂດສຳປະທານຂຸດຄົ້ນ, ຜູ້ຮ້ອງຂໍຕ້ອງມີເງື່ອນໄຂຄື:1. ເປັນນິຕິບຸກຄົນທີ່ມີໃບທະບຽນວິສາຫະກິດ ຈາກ ຂະແໜງອຸດສາຫະກຳ ແລະ ການຄ້າ2. ສຳເລັດວຽກງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ3. ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ 4. ມີໃບອະນຸຍາດລົງທຶນຈາກຂະແໜງການລົງທຶນ (ກະຊວງແຜນການ ແລະ ການລົງທຶນ) |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ລັດຖະບັນຍັດຂອງປະທານປະເທດ ສປປ ລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ | 003/ປທທ | 26.12.2012 | |
| ລະບຽບການວ່າດ້ວຍ ການຄຸ້ມຄອງໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ | 0760/ພບ | 28.05.2015 | ໝວດທີ III ການອະນຸຍາດສ້າງຕັ້ງໂຮງງານ ແລະ ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ (ມາດຕາ 7 ແລະ ມາດຕາ 10) |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 31/ສພຊ | 03.11.2017 | ພາກທີ IV ກິດຈະການກ່ຽວກັບແຮ່ທາດ (ມາດຕາ 27 ແລະ ມາດຕາ 32) |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 30 | ເມື່ອຜູ້ລົງທຶນປະກອບເອກະສານຄົບຖ້ວນແລ້ວ ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກອະນຸຍາດ ພາຍໃນ 30 ວັນລັດຖະການ(ມາດຕາ 8,<br>ຂອງລະບຽບການວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ) |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 60 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | - ການອອກໃບອະນຸຍາດແຕ່ລະຄັ້ງ ຈະບໍ່ເກີນ 5 ປີ ແລະ<br>ຈະອອກໃຫ້ຈົບຄົບຕາມກໍານົດເວລາ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໂດຍລັດຖະບານ<br>ຊຶ່ງສູງສຸດບໍ່ໃຫ້ເກີນ 20 ປີ ແລະ ສາມາດຕໍ່ໄດ້<br>ຊຶ່ງລັດຖະບານເປັນຜູ້ຕົກລົງຕາມແຕ່ລະກໍລະນີ ໂດຍອີງຕາມຂະໜາດຂອງໂຮງງານ,<br>ອາຍຸການນໍາໃຊ້ໂຮງງານ ແລະ ປະສິດທິຜົນຂອງໂຄງການ.-<br>ສໍາລັບການຕໍ່ອາຍຸໃບອະນຸຍາດແມ່ນຕ້ອງໄດ້ຍື່ນໃບສະເໜີຕໍ່ຂະແໜງພະລັງງານ ແລະ<br>ບໍ່ແຮ່ ພາຍໃນ 90 ວັນ ກ່ອນໃບອະນຸຍາດໝົດອາຍຸ ປະຕິບັດຕາມສັນຍາ,<br>ມີບົດສະຫຼຸບລາຍງານ ແລະ ແຜນການປະຕິບັດວຽກງານເປັນປົກກະຕິຕາມສັນຍາ,<br>ສຶກສາທົບທວນ ບົດວິພາກເສດຖະກິດ-ເຕັກນິກ,<br>ປະຕິບັດພັນທະທາງດ້ານການເງິນຕໍ່ລັດຖະບານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ<br>ຕາມລະບຽບການ, ໄດ້ຮັບການສະໜັບສະໜູນເຫັນດີສືບຕໍ່ຈາກປະຊາຊົນ ແລະ<br>ອົງການປົກຄອງທ້ອງຖິ່ນ.ໃນການຂໍໃບອະນຸຍາດປະກອບ, ຜູ້ສະເໜີຕ້ອງມີເງື່ອນໄຂ ແລະ<br>ປະກອບເອກະສານຄົບຖ້ວນດັ່ງລາຍການລຸ່ມນີ້: 1.<br>ສົ່ງບົດລາຍງານຜົນການດໍາເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຂອງໄລຍະຜ່ານມ<br>ແລະ ແຜນການສືບຕໍ່2. ດໍາເນີນວຽກງານຕາມແຜນການເສີມຄຸນຄ່າ ແລະ ແຍກແຮ່ທາ<br>ຫຼື ບົດວິພາກເສດຖະກິດ-ເຕັກນິກ ທີ່ໄດ້ຖືກຮັບຮອງຈາກຂະແໜງພະລັງງານ ແລະ ບໍ່ແຮ່<br>ຢ່າງເປັນປົກກະຕິ3. ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໜ້ອຍທີ່ສຸດ ຫຼື<br>ເປັນມິດຕໍ່ສິ່ງແວດລ້ອມ 4. ລາຍງານເປັນປົກກະຕິ ຕາມທີ່ກໍານົດໄວ້ໃນສັນຍາ,<br>ຂໍ້ຕົກລົງຂອງກະຊວງພະລັງງານ ແລະ ບໍ່ແຮ່5.<br>ປະຕິບັດຕາມລະບຽບຄວາມປອດໄພແຮງງານ, ສຸຂະອະນາໄມ,<br>ການປະຕິບັດພັນທະທາງດ້ານການເງິນຕໍ່ລັດຖະບານ ແລະ ອື່ນໆຢ່າງຖືກຕ້ອງ ແລະ<br>ຄົບຖ້ວນ6. ມີໜັງສືສະໜັບສະໜູນຈາກອົງການປົກຄອງທ້ອງຖິ່ນ7. ມີບົດລາຍງານ ແລະ<br>ບົດບັນທຶກການລົງກວດກາ ຂອງວິຊາການກົມຄຸ້ມຄອງບໍ່ແຮ່<br>ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງເມື່ອຜູ້ລົງທຶນໄດ້ປະກອບເອກະສານຄົບຖ້ວນແລ້<br>ກະຊວງພະລັງງານ ແລະ<br>ບໍ່ແຮ່ຈະພິຈາລະນາອອກໃບອະນຸຍາດດໍາເນີນກິດຈະການໂຮງງານອຸດສາຫະກໍາເສີມຄຸນ<br>ແລະ ແຍກແຮ່ທາດ ພາຍໃນ 30 ວັນ ລັດຖະການ |

| **ຄ່າທໍານຽມສໍາລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄໍາຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທໍານຽມທາງວິຊາການ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 300000.00 | 0.00 | 300000.00 |
| **Comments** | ອີງຕາມ: ລັດຖະດໍາລັດປະທານປະເທດ ເລກທີ 03/ປປທ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄໍາ ເຫັນຄ່າ ທໍານຽມເພີ່ມເຕີມ** | | | | |

| ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 300000.00 | 0.00 | 300000.00 |
| **ຄຳເຫັນ** | ອີງຕາມ: ລັດຖະດຳລັດປະທານປະເທດ ເລກທີ 03/ປປທ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳນຽມຕໍ່ອາຍຸເພີ່ມເຕີມ** | | | | |